ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 063 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.01.2014.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການບັນຊີ ( ສະບັບປັບປຸງ )**

---

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 025 / ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 015 /ຄປຈ,ລົງວັນທີ 23/01/2014.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍການບັນຊີ ( ສະບັບປັບປຸງ ).

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 025 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິ ຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການບັນຊີ (ສະບັບ ປັບປຸງ) ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 26 ທັນວາ 2013

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນ ສ່ວນຫຼາຍ.

<u>ມາດຕາ 2</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2013

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສະພາແຫ່ງຊາດ ເລກທີ 47 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2013

# ກົດໝາຍ
# ວ່າດ້ວຍ ການບັນຊີ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ວຽກງານບັນຊີ ຂອງຫົວໜ່ວຍຖືບັນຊີ ເພື່ອເຮັດໃຫ້ວຽກງານບັນຊີ ມີຄວາມເຂັ້ມແຂງ, ໂປ່ງໃສ, ເປັນເຄື່ອງມືໃນການຄຸ້ມຄອງ ການເງິນ ຂອງຫົວໜ່ວຍງົບປະມານຂອງລັດ ແລະ ວິສາຫະກິດ, ຕິດຕາມ ກວດກາ ແນໃສ່ຍົກສູງປະສິດທິພາບການບໍລິຫານງົບປະມານຂອງລັດ ແລະ ການບໍລິຫານທຸລະກິດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ເຕີບໃຫຍ່ ແລະ ຂະຫຍາຍຕົວ ຢ່າງໜັກແໜ້ນ ແລະ ໝັ້ນຄົງ.

**ມາດຕາ 2(ປັບປຸງ) ການບັນຊີ**

ການບັນຊີ ແມ່ນ ການເກັບກຳ, ບັນທຶກ, ຈັດປະເພດ, ປະມວນຂໍ້ມູນ, ສະຫຼຸບການເຄື່ອນໄຫວດ້ານການເງິນ ເພື່ອສ້າງເອກະສານລາຍງານການເງິນ ຂອງຫົວໜ່ວຍຖືບັນຊີ ແລະ ສະໜອງຂໍ້ມູນດ້ານການເງິນ ທີ່ເປັນປະໂຫຍດສຳຄັນໃຫ້ແກ່ພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການຕັດສິນບັນຫາ, ເປັນເຄື່ອງມືຕົ້ນຕໍ ໃນການວິເຄາະຖານະການເງິນຂອງລັດ, ຂອງວິສາຫະກິດ, ເປັນຂໍ້ມູນທີ່ສຳຄັນໃຫ້ແກ່ການບໍລິຫານ, ການຕິດຕາມ ກວດກາ, ເປັນບ່ອນອີງໃຫ້ແກ່ການກຳນົດນະໂຍບາຍ, ການປັບປຸງ ແລະ ພັດທະນາໃຫ້ສອດຄ່ອງກັບຄວາມເປັນຈິງ.

ການບັນຊີ ຂອງ ສ ປປ ລາວ ປະກອບດ້ວຍ ການບັນຊີແຫ່ງລັດ ແລະ ການບັນຊີວິສາຫະກິດ.

ມາດຕາ 3(ໃໝ່) ການອະທິບາຍຄໍາສັບ

ຄໍາສັບ ທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຄວບຄຸມຂໍ້ຜູກພັນ** ໝາຍເຖິງ ລະບົບການອະນຸມັດ ການຊໍາລະຕາມສັນຍາ ແລະ ຕາມການສັ່ງຊື້ ບົນພື້ນຖານງົບປະມານທີ່ມີຢູ່ ພາຍຫຼັງຫັກການຊໍາລະ ແລະ ຂໍ້ຜູກພັນທີ່ຕ້ອງຈ່າຍອອກແລ້ວ;

2. **ການບັນຊີທາງເອເລັກໂຕຣນິກ** ໝາຍເຖິງ ການນໍາໃຊ້ເຕັກໂນໂລຊີແບບອອບລາຍ ແລະ ແບບອິນເຕີເນັດ ເຂົ້າໃນວຽກງານບັນຊີ ຂອງຫົວໜ່ວຍຖືບັນຊີ;

3. **ການບັນຊີງົບປະມານ** ໝາຍເຖິງ ການບັນທຶກລາຍການເຄື່ອນໄຫວດ້ານງົບປະມານ ຂອງລັດ ເພື່ອສາມາດຕິດຕາມການຈັດຕັ້ງປະຕິບັດແຜນງົບປະມານ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ;

4. **ກົດຈັນຍາບັນນັກວິຊາຊີບບັນຊີ** ໝາຍເຖິງ ຫຼັກການປະພຶດ ແລະ ການເຄື່ອນໄຫວຂອງຜູ້ປະກອບວິຊາຊີບບັນຊີ;

5. **ຂໍ້ຜູກພັນ** ໝາຍເຖິງ ພັນທະທີ່ຕ້ອງດໍາເນີນການຊໍາລະເມື່ອເຖິງກໍານົດເວລາ ຫຼື ບັນລຸເງື່ອນໄຂສະເພາະໃດໜຶ່ງ;

6. **ບໍລິສັດໃນກຸ່ມ** ໝາຍເຖິງ ວິສາຫະກິດ ທີ່ຖືກຄວບຄຸມການບໍລິຫານຈັດການ ໂດຍບໍລິສັດແມ່ ຫຼື ກຸ່ມບໍລິສັດ;

7. **ບໍລິສັດແມ່ ຫຼື ກຸ່ມບໍລິສັດ** ໝາຍເຖິງ ກຸ່ມບໍລິສັດ ທີ່ຊື້ຮຸ້ນຂອງບໍລິສັດອື່ນ ໃນຈໍານວນພຽງພໍ ແລະ ມີອໍານາດຄວບຄຸມການບໍລິຫານຈັດການຂອງບໍລິສັດນັ້ນ ທັງແມ່ນວິສາຫະກິດ ທີ່ມີໜຶ່ງ ຫຼື ຫຼາຍ ບໍລິສັດໃນກຸ່ມ;

8. **ມາດຕະຖານສາກົນດ້ານການບັນຊີແຫ່ງລັດ (IPSAS)** ໝາຍເຖິງ ຊຸດມາດຕະຖານບັນຊີ ທີ່ໄດ້ກໍານົດໂດຍສະພາມາດຕະຖານສາກົນດ້ານການບັນຊີແຫ່ງລັດ ເພື່ອໃຫ້ບັນດາຫົວໜ່ວຍພາກລັດໃນທົ່ວໂລກນໍາໃຊ້ ສໍາລັບການສ້າງເອກະສານລາຍງານການເງິນ ທີ່ສະຫະພັນນັກບັນຊີສາກົນຮັບຮອງ ແລະ ປະກາດໃຊ້ໃນແຕ່ລະໄລຍະ;

9. **ສະຫະພັນນັກບັນຊີສາກົນ** (IFAC) ໝາຍເຖິງ ອົງການຈັດຕັ້ງສາກົນ ສໍາລັບວິຊາຊີບບັນຊີ. ສະຫະພັນນັກບັນຊີສາກົນ ປະກອບດ້ວຍ ສະມາຊິກສົມບູນ ແລະ ສະມາຊິກສົມທົບ ຊຶ່ງສ່ວນຫຼາຍແມ່ນ ອົງການຈັດຕັ້ງວິຊາຊີບບັນຊີ ຂອງແຕ່ລະປະເທດ;

10. **ມາດຕະຖານສາກົນດ້ານການລາຍງານການເງິນ** (IFRS) ໝາຍເຖິງ ມາດຕະຖານສາກົນດ້ານການບັນຊີ, ມາດຕະຖານສາກົນດ້ານການລາຍງານການເງິນ ແລະ ບົດຕີຄວາມໝາຍຂອງສອງມາດຕະຖານດັ່ງກ່າວ ທີ່ສະພາມາດຕະຖານສາກົນດ້ານການບັນຊີ ຮັບຮອງ ແລະ ປະກາດໃຊ້ ໃນແຕ່ລະໄລຍະ;

11. **ມາດຕະຖານການລາຍງານການເງິນ ສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ** ໝາຍເຖິງ ມາດຕະຖານບັນຊີ ທີ່ປັບມາຈາກມາດຕະຖານສາກົນ ດ້ານການລາຍງານການເງິນ ສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ (IFRS for SMEs) ເພື່ອໃຫ້ແທດເໝາະກັບວິສາຫະ

ກິດ ທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ປະກອບດ້ວຍວິສາຫະກິດຂະໜາດໃຫຍ່ ແລະ ຂະໜາດນ້ອຍ ແລະ ກາງ;

12. **ລະບົບບັນຊີ** ໝາຍເຖິງ ຫຼັກການ, ວິທີການຈັດຕັ້ງປະຕິບັດ, ຂັ້ນຕອນດຳເນີນງານ, ການຄວບຄຸມ ແລະ ມາດຕະຖານການລາຍງານການເງິນຄົບຊຸດ ທີ່ໄດ້ກຳນົດ ແລະ ນຳໃຊ້ໃນການເກັບກຳ, ບັນທຶກ, ຈັດປະເພດ, ສະຫຼຸບການເຄື່ອນໄຫວດ້ານການເງິນ ທີ່ຖືກຕ້ອງ ແລະ ທັນກຳນົດເວລາ;

13. **ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ** ໝາຍເຖິງ ວິສາຫະກິດທີ່ມີສ່ວນກ່ຽວຂ້ອງກັບຜົນປະໂຫຍດອັນສຳຄັນ ຂອງມະຫາຊົນໃນດ້ານລັກສະນະ, ຂະໜາດ ຫຼື ຈຳນວນພະນັກງານຂອງທຸລະກິດ, ວິສາຫະກິດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ດຳເນີນທຸລະກິດຕົ້ນຕໍ ໃນການຄຸ້ມຄອງຮັກສາຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຊັ່ນ ທະນາຄານທຸລະກິດ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ ແລະ ສະຖາບັນການເງິນອື່ນ ທີ່ມີຂອບເຂດທຸລະກິດກວ້າງຂວາງ. ກະຊວງການເງິນ ສາມາດກຳນົດວິສາຫະກິດອື່ນ ເປັນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ;

14. **ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ** ໝາຍເຖິງ ວິສາຫະກິດ ທີ່ບໍ່ມີສ່ວນກ່ຽວຂ້ອງກັບຜົນປະໂຫຍດສາທາລະນະ ເຊັ່ນ ວິສາຫະກິດສ່ວນບຸກຄົນ, ບໍລິສັດຈຳກັດ, ບໍລິສັດຈຳກັດຜູ້ດຽວ ແລະ ວິສາຫະກິດອື່ນ;

15. **ຫົວໜ່ວຍຖືບັນຊີ** ໝາຍເຖິງ ຫົວໜ່ວຍທີ່ຖືກກຳນົດໃຫ້ຮັບຜິດຊອບຖືບັນຊີ ຊຶ່ງມີຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ, ໂຄງການຂອງລັດ, ກອງທຶນຂອງລັດ, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ, ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ, ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກຳໄລ ແລະ ຫົວໜ່ວຍອື່ນໆ;

16. **ຫົວໜ່ວຍຖືບັນຊີແຫ່ງລັດ** ໝາຍເຖິງ ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ;

17. **ຫົວໜ່ວຍຖືບັນຊີວິສາຫະກິດ** ໝາຍເຖິງ ວິສາຫະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ດຳເນີນທຸລະກິດ ຢູ່ໃນ ສປປ ລາວ;

18. **ຫຼັກການເງິນສົດ** ໝາຍເຖິງ ພື້ນຖານການບັນຊີ ທີ່ຮັບຮູ້ການບັນທຶກບັນຊີລາຍການເຄື່ອນໄຫວທາງດ້ານການເງິນ ເມື່ອໄດ້ຮັບເງິນ ຫຼື ຊຳລະເງິນ ຕົວຈິງ;

19. **ຫຼັກການເງິນຄ້າງຮັບ-ຄ້າງຈ່າຍ** ໝາຍເຖິງ ພື້ນຖານການບັນຊີ ທີ່ຮັບຮູ້ການບັນທຶກບັນຊີລາຍການເຄື່ອນໄຫວທາງດ້ານການເງິນ ທີ່ໄດ້ເກີດຂຶ້ນ;

20. **ເອກະສານລາຍງານການເງິນສັງລວມ** ໝາຍເຖິງ ເອກະສານລາຍງານການເງິນ ຂອງຫົວໜ່ວຍຖືບັນຊີແຫ່ງລັດ ລວມທັງຂໍ້ມູນດ້ານການເງິນ ຂອງວິສາຫະກິດຂອງລັດ ແລະ ວິສາຫະກິດປະສົມ ທີ່ນຳສະເໜີເປັນເອກະສານລາຍງານການເງິນອັນດຽວ;

21. **ເອກະສານລາຍງານການເງິນສະເພາະກິດຈະການ** ໝາຍເຖິງ ເອກະສານລາຍງານການເງິນທີ່ແຍກສະເພາະກິດຈະການ ຂອງບໍລິສັດແມ່ ຫຼື ກຸ່ມບໍລິສັດ ແລະ ບໍລິສັດໃນກຸ່ມ ອອກຈາກກັນ;

22. **ເອກະສານລາຍງານການເງິນລວມກິດຈະການ** ໝາຍເຖິງ ເອກະສານລາຍງານການເງິນຂອງບໍລິສັດແມ່ ຫຼື ກຸ່ມບໍລິສັດ ພ້ອມທັງບໍລິສັດໃນກຸ່ມ ທີ່ສະແດງອອກເປັນເອກະສານລາຍງານການເງິນ ຂອງບໍລິສັດດຽວ.